ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 202 /ລບ

ນະຄອນຫຼວງວຽງຈັນ, ວັນທີ 30.06.2017

# ດຳລັດ

## ວ່າດ້ວຍຕຳແໜ່ງວິຊາການຂອງລັດຖະກອນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74 /ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມໜັງສືສະເໜີ ສະບັບເລກທີ 139/ພນ, ລົງວັນທີ 09 ມິຖຸນາ 2017 ຂອງກະຊວງພາຍໃນ.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດລະບຽບການກ່ຽວກັບຕຳແໜ່ງວິຊາການຂອງລັດຖະກອນ ເພື່ອເປັນບ່ອນອີງໃຫ້ແກ່ບັນດາອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການກຳນົດມາດຕະຖານ ແລະ ປະຕິບັດອຸດໜູນຕຳແໜ່ງວິຊາການ ແນໃສ່ຊຸກຍູ້ສົ່ງເສີມ ແລະ ພັດທະນາລັດຖະກອນ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳນານງານ ແລະ ເປັນມືອາຊີບ ທີ່ມີປະສິດທິພາບ.

**ມາດຕາ 2 ຕຳແໜ່ງວິຊາການ**

ຕຳແໜ່ງວິຊາການຂອງລັດຖະກອນແມ່ນຖານະ ຫຼື ລະດັບທາງດ້ານວິຊາການຂອງລັດຖະກອນ ບົນພື້ນຖານປະສົບການ, ຄວາມຮູ້ຄວາມສາມາດ ແລະ ວຸດທິການສຶກສາ.

## ໝວດທີ 2
## ລະດັບຕຳແໜ່ງວິຊາການ

**ມາດຕາ 3 ລະດັບຕຳແໜ່ງວິຊາການ**

ຕຳແໜ່ງວິຊາການຂອງລັດຖະກອນ ມີ ສາມ ລະດັບ ດັ່ງນີ້:

1. ອາວຸໂສ;
2. ຊ່ຽວຊານ;
3. ປະສົບການ.

**ມາດຕາ 4 ຕໍາແໜ່ງອາຈານ**

ຕໍາແໜ່ງອາຈານ ແມ່ນຕໍາແໜ່ງສູງສຸດທາງດ້ານວິຊາການຂອງລັດຖະກອນ ທີ່ມີວຸດທິການສຶກສາ, ຄວາມຮູ້ຄວາມສາມາດ, ຄວາມຊໍານານງານ ແລະ ມີປະສົບການຄົ້ນຄວ້າທາງດ້ານວິຊາການໃນລະດັບສູງ.

**ມາດຕາ 5 ຕໍາແໜ່ງຊ່ວຍຊານ**

ຕໍາແໜ່ງຊ່ວຍຊານ ແມ່ນຕໍາແໜ່ງທາງດ້ານວິຊາການຂອງລັດຖະກອນທີ່ມີວຸດທິການສຶກສາ, ຄວາມຮູ້ຄວາມສາມາດ, ຄວາມຊໍານານງານ ແລະ ມີປະສົບການຄົ້ນຄວ້າທາງດ້ານວິຊາການໃນລະດັບກາງ.

**ມາດຕາ 6 ຕໍາແໜ່ງປະສິບການ**

ຕໍາແໜ່ງປະສົບການ ແມ່ນຕໍາແໜ່ງທາງດ້ານວິຊາການຂອງລັດຖະກອນທີ່ມີວຸດທິການສຶກສາ, ຄວາມຮູ້ຄວາມສາມາດ, ຄວາມຊໍານານງານ ແລະ ມີປະສົບການຄົ້ນຄວ້າທາງດ້ານວິຊາການໃນລະດັບຕົ້ນ.

## ໝວດທີ 3
## ມາດຕະຖານຕໍາແໜ່ງວິຊາການ

**ມາດຕາ 7 ມາດຕະຖານລວມ**

ມາດຕະຖານ ສໍາລັບຕໍາແໜ່ງວິຊາການມີດັ່ງນີ້ :

1. ມີທັດສະນະການເມືອງຖືກຕ້ອງ, ມີຄຸນສົມບັດປະຕິວັດ, ມີຄວາມຈົງຮັກພັກດີຕໍ່ພັກ-ລັດ, ລະບອບປະຊາທິປະໄຕປະຊາຊົນ, ມີນໍ້າໃຈຮັກຊາດ ແລະ ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ;
2. ເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ;
3. ມີສະຕິຕໍ່ການຈັດຕັ້ງ ແລະ ມີລະບຽບວິໄນ;
4. ຮູ້ນໍາໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານ;
5. ມີວິຊາສະເພາະໃດໜຶ່ງທີ່ແນ່ນອນ ສົມຄູ່ກັບຕໍາແໜ່ງງານ;
6. ສາມາດສຶກສາຄົ້ນຄວ້າດ້ານວິຊາການ, ວິເຄາະວິໄຈບັນຫາຕ່າງໆ ແລະ ສະເໜີຜົນງານສູ່ສັງຄົມ;
7. ເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງຂອງຕົນ ແລະ ມະຫາຊົນ;
8. ຮູ້ພາສາຕ່າງປະເທດໃດໜຶ່ງທີ່ຈໍາເປັນ ໃນລະດັບຂັ້ນພື້ນຖານຂຶ້ນໄປ;
9. ມີສຸຂະພາບດີ.

**ມາດຕາ 8 ມາດຕະຖານສະເພາະ ສໍາລັບຕໍາແໜ່ງອາຈານ**

ຕໍາແໜ່ງອາຈານ ນອກຈາກມາດຕະຖານລວມແລ້ວ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. ດ້ານຄວາມຮູ້ :
   - ກໍາແໜ້ນແນວທາງນະໂຍບາຍຂອງພັກ, ມະຕິ, ຄໍາສັ່ງ, ກົດໝາຍ ແລະ ລະບຽບການຂອງລັດ ໃນແຕ່ລະໄລຍະ;
   - ມີຄວາມຮູ້ກ່ຽວກັບແນວຄິດ, ທິດສະດີດ້ານການບໍລິຫານລັດ ແລະ ເຕັກນິກວິຊາການຢ່າງກວ້າງຂວາງ;
   - ມີຄວາມຮູ້, ບົດຮຽນ ແລະ ປະສົບການຫຼາຍທີ່ສຸດ ໃນການຄົ້ນຄວ້າ, ວິເຄາະ ແລະ ວິໄຈບັນຫາ;
   - ຮູ້ພົວພັນ ແລະ ປະສານສົມທົບກັບພາຍໃນ ແລະ ພາຍນອກ;
   - ມີວຸດທິການສຶກສາລະດັບປະລິນຍາຕີ ຂຶ້ນໄປ.

2. ດ້ານຄວາມສາມາດ :

- ຜັນຂະຫຍາຍແນວທາງຂອງພັກ ແລະ ນະໂຍບາຍຂອງລັດ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ໃນຂະແໜງການຕົນໃນແຕ່ລະໄລຍະ;
- ຄົ້ນຄວ້າ, ວິເຄາະ, ວິໄຈ ບັນຫາ, ນະໂຍບາຍ ແລະ ຍຸດທະສາດ ໃນລະດັບດີຫລາຍ;
- ຄົ້ນຄວ້າສ້າງເອກະສານ, ປື້ມຕຳລາ ຫຼື ບົດສອນ ໄດ້ດີຫລາຍ;
- ນຳໃຊ້ວິຊາສະເພາະເຂົ້າໃນການປະຕິບັດວຽກງານ ໄດ້ຢ່າງມີປະສິດທິພາບ;
- ໃຫ້ຄຳປຶກສາ ແລະ ແນະນຳທາງດ້ານວິຊາການ ຢ່າງມີປະສິດທິພາບ.

3. ດ້ານຜົນງານ :

- ມີຜົນງານການຄົ້ນຄວ້າທາງດ້ານວິຊາການທີ່ມີວິທະຍາສາດ ຫຼື ຜະລິດຕະພັນ ອອກຮັບໃຊ້ການຈັດຕັ້ງ ແລະ ສັງຄົມ;
- ມີຜົນງານໃນການຈັດຕັ້ງປະຕິບັດວຽກງານຕາມວິຊາສະເພາະຂອງຕົນ ທີ່ເປັນຜົນປະໂຫຍດ ແລະ ເປັນທີ່ຍອມຮັບຈາກການຈັດຕັ້ງ ແລະ ສັງຄົມ.

4. ດ້ານປະສົບການ : ດຳລົງຕຳແໜ່ງຊ່ຽວຊານມາແລ້ວ ຢ່າງໜ້ອຍ 3 ປີ.

**ມາດຕາ 9 ມາດຕະຖານສະເພາະ ສຳລັບຕຳແໜ່ງຊ່ຽວຊານ**

ຕຳແໜ່ງຊ່ຽວຊານ ນອກຈາກມາດຕະຖານລວມແລ້ວ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. ດ້ານຄວາມຮູ້ :

- ກຳແໜ້ນແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຂອງລັດ ໃນແຕ່ລະໄລຍະ;
- ມີຄວາມຮູ້ກ່ຽວກັບແນວຄິດ, ທິດສະດີດ້ານການບໍລິຫານລັດ ແລະ ເຕັກນິກວິຊາການ ທີ່ແນ່ນອນ;
- ມີຄວາມຮູ້, ບົດຮຽນ ແລະ ປະສົບການຫລາຍ ໃນການຄົ້ນຄວ້າ, ວິເຄາະ ແລະ ວິໄຈບັນຫາ;
- ຮູ້ພົວພັນ ແລະ ປະສານສົມທົບກັບພາຍໃນ ແລະ ພາຍນອກ;
- ມີວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ.

2. ດ້ານຄວາມສາມາດ :

- ຜັນຂະຫຍາຍແນວທາງຂອງພັກ ແລະ ນະໂຍບາຍຂອງລັດ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ໃນຂະແໜງການຕົນ ໃນແຕ່ລະໄລຍະ;
- ຄົ້ນຄວ້າ, ວິເຄາະ, ວິໄຈບັນຫາ, ນະໂຍບາຍ ແລະ ຍຸດທະສາດ ໃນລະດັບດີ;
- ຄົ້ນຄວ້າສ້າງເອກະສານ, ປື້ມຕຳລາ ຫຼື ບົດສອນ ໄດ້ດີ;
- ນຳໃຊ້ວິຊາສະເພາະເຂົ້າໃນການປະຕິບັດວຽກງານໄດ້ດີ;
- ໃຫ້ຄຳປຶກສາ ແລະ ແນະນຳທາງດ້ານວິຊາການໄດ້ດີ.

3. ດ້ານຜົນງານ :

- ມີຜົນງານການຄົ້ນຄວ້າດ້ານວິຊາການ ທີ່ມີວິທະຍາສາດ ຫຼື ຜະລິດຕະພັນ ອອກຮັບໃຊ້ການຈັດຕັ້ງ ແລະ ສັງຄົມ;
- ມີຜົນງານໃນການຈັດຕັ້ງປະຕິບັດວຽກງານຕາມວິຊາສະເພາະຂອງຕົນ ທີ່ເປັນຜົນປະໂຫຍດ ແລະ ຍອມຮັບຈາກການຈັດຕັ້ງ.

4. ດ້ານປະສົບການ : ດຳລົງຕຳແໜ່ງປະສົບການມາແລ້ວ ຢ່າງໜ້ອຍ 5 ປີ.

**ມາດຕາ 10 ມາດຕະຖານສະເພາະ ສຳລັບຕຳແໜ່ງປະສົບການ**

ຕຳແໜ່ງປະສົບການ ນອກຈາກມາດຕະຖານລວມແລ້ວ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. **ດ້ານຄວາມຮູ້ :**
   - ກຳແໜ້ນແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຂອງລັດ ໃນແຕ່ລະໄລຍະ;
   - ມີຄວາມຮູ້ກ່ຽວກັບແນວຄິດ, ທິດສະດີ ດ້ານການບໍລິຫານລັດ ແລະ ເຕັກນິກວິຊາການ;
   - ມີຄວາມຮູ້, ບົດຮຽນ ແລະ ປະສົບການ ໃນການຄົ້ນຄວ້າ, ວິເຄາະ ແລະ ວິໄຈບັນຫາ;
   - ຮູ້ພົວພັນ ແລະ ປະສານສົມທົບກັບພາຍໃນ ແລະ ພາຍນອກ;
   - ມີວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ.

2. **ດ້ານຄວາມສາມາດ :**
   - ຜັນຂະຫຍາຍແນວທາງຂອງພັກ ແລະ ນະໂຍບາຍຂອງລັດ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ໃນຂະແໜງການຕົນ ໃນແຕ່ລະໄລຍະ;
   - ຄົ້ນຄວ້າ, ວິເຄາະ, ວິໄຈ ບັນຫາ, ນະໂຍບາຍ ແລະ ຍຸດທະສາດ ໃນລະດັບທີ່ແນ່ນອນ;
   - ຄົ້ນຄວ້າສ້າງເອກະສານ, ປື້ມຕຳລາ ຫຼື ບົດສອນ;
   - ນຳໃຊ້ວິຊາສະເພາະເຂົ້າໃນການປະຕິບັດວຽກງານ ໄດ້ໃນລະດັບທີ່ແນ່ນອນ;
   - ໃຫ້ຄຳປຶກສາ ແລະ ແນະນຳທາງດ້ານວິຊາການ.

3. **ດ້ານຜົນງານ :**
   - ມີຜົນງານການຄົ້ນຄວ້າດ້ານວິຊາການ ທີ່ມີວິທະຍາສາດ ຫຼື ຜະລິດຕະພັນ ອອກຮັບໃຊ້ການຈັດຕັ້ງ ແລະ ສັງຄົມ;
   - ມີຜົນງານໃນການຈັດຕັ້ງປະຕິບັດວຽກງານຕາມວິຊາສະເພາະຂອງຕົນ ທີ່ເປັນຜົນປະໂຫຍດ ແລະ ຍອມຮັບຈາກການຈັດຕັ້ງ.

4. **ດ້ານປະສົບການ :** ເປັນລັດຖະກອນມາແລ້ວ ຢ່າງໜ້ອຍ 10ປີ.

## ໝວດທີ 4
## ການຮັບຮອງ ແລະ ການແຕ່ງຕັ້ງຕຳແໜ່ງວິຊາການ

**ມາດຕາ 11 ການຮັບຮອງຕຳແໜ່ງວິຊາການ**

ສະພາວິທະຍາສາດ ຂອງແຕ່ລະຂະແໜງການ ເປັນຜູ້ພິຈາລະນາຮັບຮອງຕຳແໜ່ງວິຊາການອາວຸໂສ, ຊ່ຽວຊານ ແລະ ປະສົບການ ບົນພື້ນຖານມາດຕະຖານທີ່ກຳນົດໄວ້.

ສຳລັບອົງການຈັດຕັ້ງທີ່ບໍ່ມີສະພາວິທະຍາສາດ ໃຫ້ຖືເອົາອົງການຄຸ້ມຄອງພະນັກງານ-ລັດຖະກອນຂອງຕົນ ໃນການພິຈາລະນາຮັບຮອງຕຳແໜ່ງວິຊາການດັ່ງກ່າວ.

**ມາດຕາ 12 ການແຕ່ງຕັ້ງຕຳແໜ່ງວິຊາການ**

ນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງຕຳແໜ່ງວິຊາການອາວຸໂສ ແລະ ຊ່ຽວຊານ ຕາມການສະເໜີຂອງລັດຖະມົນຕີກະຊວງພາຍໃນ ບົນພື້ນຖານການຮັບຮອງຈາກສະພາວິທະຍາສາດ ຫຼື ອົງການຄຸ້ມຄອງພະນັກງານ-ລັດຖະກອນ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າຄະນະຂອງພັກ, ປະທານແນວລາວສ້າງຊາດ, ປະທານ ຫຼື ເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫລວງ ເປັນຜູ້ແຕ່ງຕັ້ງຕຳແໜ່ງວິຊາການປະສົບການ ຕາມການເຫັນດີຂອງລັດຖະມົນຕີກະຊວງພາຍໃນ ບົນພື້ນຖານການຮັບຮອງຈາກສະພາວິທະຍາສາດ ຫຼື ອົງການຄຸ້ມຄອງພະນັກງານ-ລັດຖະກອນ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ 5
## ການຮັບ ແລະ ການສິ້ນສຸດ ອຸດໜູນຕຳແໜ່ງວິຊາການ

**ມາດຕາ 13 ການອຸດໜູນຕຳແໜ່ງວິຊາການ**

ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງວິຊາການ ໄດ້ຮັບເງິນອຸດໜູນ ດັ່ງນີ້:

1. ຫ້າສິບ ສ່ວນຮ້ອຍ ຕາມຊັ້ນ ແລະ ຂັ້ນເງິນເດືອນພື້ນຖານ ສຳລັບຕຳແໜ່ງວິຊາການ ອາວຸໂສ;
2. ສີ່ສິບ ສ່ວນຮ້ອຍ ຕາມຊັ້ນ ແລະ ຂັ້ນ ເງິນເດືອນພື້ນຖານ ສຳລັບຕຳແໜ່ງວິຊາການ ຊ່ຽວຊານ;
3. ສາມສິບ ສ່ວນຮ້ອຍ ຕາມຊັ້ນ ແລະ ຂັ້ນເງິນເດືອນພື້ນຖານ ສຳລັບຕຳແໜ່ງວິຊາການ ປະສົບການ.

**ມາດຕາ 14 ການສິ້ນສຸດອຸດໜູນຕຳແໜ່ງວິຊາການ**

ເງິນອຸດໜູນຕຳແໜ່ງວິຊາການ ຈະສິ້ນສຸດໃນກໍລະນີ ດັ່ງນີ້:

1. ລາອອກຈາກໜ້າທີ່ທາງລັດຖະການ;
2. ເສຍສັນຊາດລາວ;
3. ຮັບໜ້າທີ່ໃໝ່ ທີ່ບໍ່ແມ່ນຕຳແໜ່ງວິຊາການ;
4. ປະລະໜ້າທີ່;
5. ຖືກໄລ່ອອກ;
6. ເສຍກຳລັງແຮງງານ;
7. ຮັບອຸດໜູນບຳນານ;
8. ເສຍຊີວິດ.

ລັດຖະກອນ ທີ່ມີຕຳແໜ່ງວິຊາການໃດໜຶ່ງ ຊຶ່ງໄດ້ໄປສຶກສາຮ່ຳຮຽນ, ບຳລຸງຍົກລະດັບຢູ່ບ່ອນອື່ນຢ່າງເປັນປະຈຳແຕ່ 6 ເດືອນຂຶ້ນໄປ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນບັນຫາດ້ານສຸຂະພາບ ຫຼື ຍ້ອນສາເຫດອື່ນ ແຕ່ 3 ເດືອນຂຶ້ນໄປ ຈະບໍ່ໄດ້ຮັບເງິນອຸດໜູນຕຳແໜ່ງວິຊາການ.

ສຳລັບລັດຖະກອນ ທີ່ມີຕຳແໜ່ງວິຊາການ ຊຶ່ງຖືກແຕ່ງຕັ້ງໃຫ້ໄປປະຈຳການຢູ່ລັດວິສາຫະກິດ, ອົງການຈັດຕັ້ງ ຫຼື ໂຄງການຊ່ວຍເຫຼືອຂອງສາກົນ ຈະບໍ່ໄດ້ຮັບເງິນອຸດໜູນຕຳແໜ່ງວິຊາການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງພາຍໃນ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ສຳລັບຂະແໜງການທີ່ມີຄວາມຈຳເປັນ ກໍໃຫ້ຄົ້ນຄວ້າກຳນົດເພີ່ມຕື່ມກ່ຽວກັບມາດຕະຖານວິຊາສະເພາະຂະແໜງການຕົນຕາມຄວາມເໝາະສົມ.

**ມາດຕາ 16 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ